# ການສ້າງຊຸມຊົນພັນທະກິດໃໝ່ຂອງທ່ານ

## ຂັ້ນຕອນຕ່າງໆ

### 1 ຈົ່ງເລືອກ

ຢູ່ໃສ? ຊຸມຊົນທີ່ໃກ້ທ່ານຫຼາຍທີ່ສຸດທີ່ຕ້ອງໄດ້ຮູ້ຈັກພຣະເຢຊູ.



ຜູ້ໃດ? ບຸກຄົນແຫ່ງສັນຕິທີ່ຈະເຊື່ອມໂຍງທ່ານ ກັບຊຸມຊົນ



ກັບ? ຕີໂມທຽວ ເພື່ອການເກີດຜົນແບບທະວີຄູນ.

### 2 ສະແດງ

ແບ່ງປັນຮູບເງົາເລື່ອງພຣະເຢຊູກັບກຸ່ມທີ່ມີຄົນ 10 ຄົນຫຼືຫຼາຍກວ່າແລະເຊື້ອເຊີນໃຫ້ພວກເຂົາໄດ້ກັບ ມາຮຽນຮູ້ເລື່ອງຂອງພຣະເຢຊູອີກ.






### 3 ເລີ່ມຕົ້ນ

ຈົ່ງເລີ່ມພົບປະກັບຊຸມຊົນພັນທະກິດຂອງທ່ານໂດຍໃຊ້ຫຼັກການເຝິກອົບຮົມສາວົກ 3/3.

### 4 ທະວີຄູນ

ສົ່ງຕີໂມທຽວຂອງທ່ານອອກໄປເລີ່ມພັນທະກິດຊຸມ ຊົນຂອງເຂົາເຈົ້າເອງ.



## ປັດໃຈສຳຄັນ

### ບຸກຄົນແຫ່ງສັນຕິ

ບຸກຄົນອັນເປັນທີ່ເຄົາລົບ, ມີຄວາມຝັກໄຝ່ຝ່າຍວິນ ຍານ ແລະພ້ອມທີ່ຈະເຊື້ອເຊີນໝູ່ເພື່ອນ ແລະຄອບຄົວໃຫ້ມາເບິ່ງເລື່ອງພຣະເຢຊູນຳກັນ (ລກ 10:6)

### ຕີໂມທຽວ

ຜູ້ທີ່ເຊື່ອທີ່ສາມາດສອນໄດ້, ສັດຊື່ ແລະພົ່ງພອ້ມໃນການທະວີຄູນພັນທະກິດຊຸມຊົນ (ຕມທ 2:2)

### ພັນທະກິດຊຸມຊົນ

ຊຸມຊົນຝ່າຍວິນຍານທີ່ເພີ່ມຈຳນວນ, ເຕີບໃຫຍ່ ແລະເຮັດການທະວີຄູນເພື່ອເລີ່ມຊຸມຊົນຝ່າຍວິນຍານ ໃໝ່ອີກ.

# 3/3 ໂຄງຮ່າງການເປັນສາວົກສຳລັບການ ລວມ ພັນທະກິດຊຸມຊົນ

## ການເບິ່ງຍ້ອນຫລັງ

ການເບິ່ງຍ້ອນຫຼັງໝາຍເຖິງການສ້າງຊຸມຊົນໂດຍຜ່ານທາງການເບິ່ງແຍງເຊິ່ງກັນແລະກັນໃນຂະນະທີ່ມີການ ສະຫຼອງຄວາມສັດຊື່ຂອງພຣະເຈົ້າ ແລະການເຕີບ ໃຫຍ່ຂອງກັນແລະກັນ.

**ການເບິ່ງແຍງກັນ**
ແບ່ງປັນຈາກຊີວິດຂອງທ່ານ (ບັນຫາເລື່ອງສຸຂະພາບ, ຄອບຄົວ, ການເງິນ, ຄວາມຕ້ອງການຝ່າຍວິນຍານ ແລະອື່ນໆ) ແລະອະທິຖານເພື່ອເຊິ່ງກັນແລະກັນ.

**ການນະມັດສະການ**
ການສັນລະເສີນພຣະເຈົ້າດ້ວຍບົດເພງ, ດົນຕີ, ການຟ້ອນລຳ ຫຼືຄຳພະຍານ.

**ວາງນິມິດ**
ແບ່ງປັນວິທີທີ່ທ່ານສາມາດເປັນຜູ້ຕິດຕາມພຣະເຢຊູທີ່ດີຂຶ້ນ ແລະສິ່ງທີ່ຊຸມຊົນຂອງທ່ານສາມາດເຮັດໄດ້ເພື່ອນຳຄົນອື່ນມາເຖິງພຣະຄຣິດ.

**ມີຄວາມຮັບຜິດຊອບ**
ສະແດງໃຫ້ເຫັນວ່າທ່ານມີການເຊື່ອຟັງພຣະຄຳແລະສ້າງສາວົກຄືແນວໃດແດ່.

## ການເບິ່ງຂຶ້ນເທິງ

ການເບິ່ງຂຶ້ນເທິງມີຄວາມໝາຍເຖິງການໄດ້ຍິນຈາກ ພຣະເຈົ້າພ້ອມກັນ. ແມ່ນການໃຊ້ແທັບເລັດຫຼືສະມາດໂຟນຂອງທ່ານ ເບິ່ງຄລິບຕໍ່ໄປຈາກຮູບເງົາ ເລື່ອງພຣະເຢຊູ ແລະສົນທະນາກັນ.

### ຂັ້ນຕອນຕ່າງໆ

1. **ສະແດງ:** ເບິ່ງຕອນໃດໜຶ່ງສອງຄັ້ງ ✕ 2
2. **ບອກ:** ຂໍໃຫ້ສະມາຊິກໃນກຸ່ມເລົ່າຄືນຕອນທີ່ໄດ້ເບິ່ງ ໄປເປັນຄຳເວົ້າຂອງເຂົາເຈົ້າເອງ
3. **ສຳເລັດ:** ໃຫ້ກຸ່ມໄດ້ເວົ້າຕື່ມໃນສ່ວນທີ່ຂາດຫາຍໄປຂອງເລື່ອງ ຫຼືດັດແກ້ສິ່ງທີ່ບໍ່ຖືກຕ້ອງ.
4. **ການສົນທະນາ**
    - ໃນເລື່ອງນີ້, ທ່ານມັກຫຍັງຫຼາຍທີ່ສຸດ?
    - ໃນຕອນນີ້ ພວກເຮົາສາມາດຮຽນຮູ້ຫຍັງ ເລື່ອງຂອງພຣະເຈົ້າໄດ້ແດ່?
    - ໃນຕອນນີ້ ພວກເຮົາສາມາດຮຽນຮູ້ຫຍັງ ເລື່ອງຂອງມະນຸດໄດ້ແດ່?
    - ມີຫຼັກການ ຫຼືພຣະຄຳສັ່ງຫຍັງບໍທີ່ພວກ ເຮົາຕ້ອງເຊື່ອຟັງ?
    - ມີຜິດບາບຫຍັງທີ່ຕ້ອງຫລີກລ້ຽງບໍ?

## ການເບິ່ງໄປທາງໜ້າ

ການເບິ່ງໄປຂ້າງໜ້າໝາຍເຖິງການຈັດຕຽມພັນທະກິດ ໂດຍການນຳໃຊ້ບົດຮຽນ, ການປະຕິບັດເລື່ອງນັ້ນ ແລະການອະທິຖານຮ່ວມກັນ

**ການນຳໃຊ້**

- ແບ່ງປັນກັບກຸ່ມຂອງສິ່ງທີ່ພຣະເຈົ້າຢາກໃຫ້ກຸ່ມຕອບສະໜອງຕໍ່ສິ່ງທີ່ພວກເຮົາໄດ້ຮຽນວັນນີ້.
- ຈົ່ງຄິດເຖິງບຸກຄົນໃນຊຸມຊົນຂອງທ່ານທີ່ຕ້ອງໄດ້ຍິນເລື່ອງນີ້.

**ການປະຕິບັດ**

- ການເລົ່າເລື່ອງສູ່ກັນຟັງ

**ການເຊື້ອເຊີນ**

- ແບ່ງປັນເລື່ອງຂອງມື້ນີ້ກັບຄົນອື່ນ ແລະເຊື້ອເຊີນ ພວກເຂົາໃຫ້ມາຮ່ວມກຸ່ມໃນການພົບປະເທື່ອຕໍ່ໄປ.

**ການອະທິຖານ**

- ຂອບຄຸນພຣະເຈົ້າສຳລັບສິ່ງທີ່ພວກເຮົາໄດ້ຮຽນຮູ້
- ອະທິຖານເພື່ອຄົນອື່ນໃນຊຸມຊົນຂອງພວກເຮົາ
- ອະທິຖານເພື່ອກັນແລະກັນໃນກຸ່ມຂອງພວກເຮົາ